# ການພັດທະນາວິຊາຊີບແບບຕໍ່ເນື່ອງ

ຄູຊັ້ນປະຖົມສຶກສາ, ຜູ້ອຳນວຍການໂຮງຮຽນ, ຄູສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ແລະ ຕໍ່ຄວາມສຳເລັດຂອງນັກຮຽນ.

ແນ່ນອນທີ່ສຸດວ່າ, ການຄົ້ນຄວ້າວຽກງານການສຶກສາໄດ້ສະແດງໃຫ້ເຫັນວ່າ ຄຸນນະພາບການສອນ ແລະ ຜູ້ນຳໂຮງຮຽນແມ່ນປັດໄຈສຳຄັນໃນການປັບປຸງຜົນການຮຽນຂອງນັກຮຽນ.

ເພື່ອໃຫ້ຄູສາມາດສອນຢ່າງມີປະສິດທິພາບທີ່ສຸດ, ຄູຕ້ອງສືບຕໍ່ຂະຫຍາຍຄວາມຮູ້ ແລະ ທັກສະຂອງຕົນຢ່າງບໍ່ຢຸດຢັ້ງ.

ຄູຊັ້ນປະຖົມສຶກສາ ຕ້ອງສືບຕໍ່ຮຽນພາຍຫຼັງການຝຶກອົບຮົມຫຼັກສູດສະບັບປັບປຸງໃໝ່ ແລະ ຕ້ອງການ ການສະໜັບສະໜູນແບບຕໍ່ເນື່ອງຕະຫຼອດສົກຮຽນ ເພື່ອເປັນແນວທາງໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່.

ມີຫຼາຍເຄື່ອງມືທີ່ໄດ້ຖືກພັດທະນາຂຶ້ນ ເພື່ອສະໜັບສະໜູນຄູຢູ່ໂຮງຮຽນ ແລະ ຂັ້ນທ້ອງຖິ່ນ ເພາະພວກເຂົາຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່ໃນຫ້ອງຮຽນຂອງພວກເຂົາ.

ເຄື່ອງມືເຫຼົ່ານີ້ ຖືກພັດທະນາຂຶ້ນໂດຍມີຈຸດປະສົງໃຫ້ຖືກນຳໃຊ້ໂດຍຄູ, ຜູ້ອຳນວຍການ, ຄູສຶກສານິເທດ, ຄູຝຶກຂັ້ນແຂວງ ທີ່ກ່ຽວຂ້ອງ.

## ຄູສາມາດຂໍການສະໜັບສະໜູນຈາກໃຜ?

- ຜູ້ອຳນວຍການໂຮງຮຽນຂອງທ່ານ
- ເພື່ອນຮ່ວມງານຂອງທ່ານ
- ຄູສຶກສານິເທດ
- ຄູ ຊັ້ນ ປ.1 ແລະ ປ.2 ຜູ້ທີ່ເຄີຍນຳໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່
- ຄູທ່ານອື່ນໆ ຈາກໂຮງຮຽນຂອງທ່ານ
- ຄູຝຶກຂັ້ນແຂວງ
- ຮອບວຽນຂອງການຮຽນຖ້າຄູມີຫົວຂໍ້ໃດໜຶ່ງ
- ກຸ່ມຮຽນຜ່ານວ໋ອດແອັບຂອງທ່ານ
- ຄູປະຖົມທ່ານອື່ນໆໃນເມືອງຂອງທ່ານ

## ມີສື່ອຸປະກອນຫຍັງແດ່ທີ່ມີສຳລັບການພັດທະນາວິຊາຊີບແບບຕໍ່ເນື່ອງ

> ປຶ້ມຄູ່ມືຝຶກອົບຮົມສຳລັບສຳມະນາກອນ
> ເຄື່ອງມືໃຫ້ການຊ່ວຍເຫຼືອໃນພາກຮຽນ
> ວາງແຜນການສອນ ແລະ ຄຳແນະນຳ

> ວິດີໂອ
> ປຶ້ມແບບຮຽນ
> ປຶ້ມຄູ່ມືຄູ

ຖ້າຫາກທ່ານບໍ່ມີ ຫຼື ບໍ່ຮູ້ວິທີເຂົ້າເຖິງສິ່ງເຫຼົ່ານີ້ ໃຫ້ລົມກັບຜູ້ອຳນວຍການຂອງທ່ານ, ຄູສຶກສານິເທດ ຫຼື ພະນັກງານຫ້ອງການສຶກສາເມືອງຂອງທ່ານ.

# 8 ຄຳແນະນຳ ສຳລັບຄູໃນການກຽມຄວາມພ້ອມ ສຳລັບການສອນໃນສົກຮຽນໃໝ່

- ອ່ານ ແລະ ທຳຄວາມເຂົ້າໃຈສື່ອຸປະກອນການຝຶກອົບຮົມຕ່າງໆ, ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນກ່ອນເປີດສົກຮຽນ
- ຕົບແຕ່ງຫ້ອງຮຽນໂດຍການນຳໃຊ້ໂປສະເຕີ້ ແລະ ເພີ່ມສີສັນໃນຫ້ອງເພື່ອເຮັດໃຫ້ມີຄວາມໜ້າສົນໃຈ ແລະ ສ້າງຄວາມດຶງດູດ
- ສ້າງບັດສຽງ ແລະ ບັດຮູບພາບ ສຳລັບວິຊາພາສາອັງກິດ
- ກະກຽມປຶ້ມບັນທຶກເພື່ອເກັບກຳຄະແນນການປະເມີນແບບຮູບທຳ
- ຈັດສັນຫ້ອງຮຽນ ທີ່ອຳນວຍຄວາມສະດວກໃນການເຮັດກິດຈະກຳກຸ່ມ
- ນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ເພື່ອວາງແຜນການສອນ
- ກວດຄືນສື່ການຮຽນການສອນ ທີ່ມີຢູ່ແລ້ວໃນໂຮງຮຽນ ແລະ ເບິ່ງວ່າມີສື່ການຮຽນການສອນອັນໃດແດ່ທີ່ທ່ານສາມາດສ້າງເອງໄດ້
- ເບິ່ງວິດີໂອການຝຶກອົບຮົມຄູເພື່ອປັບປຸງເຕັກນິກການສອນຂອງທ່ານເອງ



# ເຄື່ອງມືໃຫ້ການຊ່ວຍເຫຼືອໃນພາກຮຽນ

5 ວິທີການ ແລະ ເຄື່ອງມືໃນການພັດທະນາວິຊາຊີບແບບຕໍ່ເນື່ອງມີດັ່ງນີ້:



### ການສັງເກດການສອນຂອງຄູໃນຫ້ອງຮຽນໂດຍຜູ້ອຳນວຍການ ຫຼື ຄູສຶກສານິເທດ

ການສັງເກດການສອນໃນຫ້ອງຮຽນນີ້ ຈະຊ່ວຍໃຫ້ທ່ານ:

> ໄດ້ຮັບຄຳຄິດເຫັນໃນທາງສ້າງສັນ
> ປັບປຸງຄຸນນະພາບການສອນ
> ເນັ້ນໃສ່ຂົງເຂດສຳຄັນບ່ອນທີ່ຕ້ອງການ ການສະໜັບສະໜູນ
> ເລືອກເອົາວິທີການເພື່ອແກ້ໄຂບັນຫາການສອນທີ່ທ້າທາຍ

**ຂຽນກິດຈະກຳການພັດທະນາວິຊາຊີບແບບຕໍ່ເນື່ອງ ທີ່ທ່ານໄດ້ຝຶກ ຫຼື ທ່ານຕ້ອງການທົດລອງໃຊ້ໃສ່ບ່ອນນີ້:**






### ການກະກຽມ ແລະ ການສົ່ງຄວາມຮູ້ ໂດຍຄູຈະເຮັດວຽກຮ່ວມກັບຜູ້ອຳນວຍການ, ຄູສຶກສານິເທດ ຫຼື ຄູຝຶກ

ການສອນເປັນທີມນີ້ ຈະຊ່ວຍໃຫ້ທ່ານ:

> ຄົ້ນພົບກິດຈະກຳໃໝ່ໃນຫ້ອງຮຽນ
> ແກ້ໄຂບັນຫາການສອນທີ່ທ້າທາຍ
> ຮຽນຮູ້ຈາກຄູທ່ານອື່ນທີ່ມາສອນຮ່ວມ
> ສັງເກດ ແລະ ສາທິດເຕັກນິກການສອນແບບໃໝ່ ແລະ ການຈັດກິດຈະກຳ
> ເປັນວິທີທີ່ດີທີ່ສຸດສຳລັບຄູຈົບໃໝ່ ທີ່ຈະໄດ້ຮັບການຊ່ວຍເຫຼືອໃນການສອນ

ມີເຕັກນິກການສອນແບບເປັນທີມຫຼາຍເຕັກນິກ ທີ່ທ່ານສາມາດເຂົ້າເບິ່ງໄດ້ຕາມຄວາມຕ້ອງການຂອງທ່ານ.

### ປະຊຸມກຸ່ມເປັນປະຈຳ ເຊິ່ງໃນກຸ່ມໜຶ່ງແມ່ນມີຄູປະມານ 3-12 ທ່ານ ເພື່ອສະໜັບສະໜູນການສອນເຊິ່ງກັນ ແລະ ກັນ - ຫົວຂໍ້ການປະຊຸມແມ່ນອີງໃສ່ຄວາມຕ້ອງການ ການຮຽນຂອງບັນດາຄູ



ຮອບວຽນຂອງການຮຽນນີ້ ຈະຊ່ວຍໃຫ້ທ່ານ:

> ສະທ້ອນຄືນການສອນຂອງທ່ານ
> ແບ່ງປັນປະສົບການ ການສອນທີ່ປະຕິບັດໄດ້ດີ ແລະ ສິ່ງທ້າທາຍ
> ແກ້ໄຂບັນຫາທີ່ຫຍຸ້ງຍາກຮ່ວມກັນ
> ຮຽນຮູ້ຄວາມຄິດ ແລະ ເຕັກນິກການສອນໃໝ່ໆ



### ຄູ, ຜູ້ອຳນວຍການ ແລະ ຄູສຶກສານິເທດ ແມ່ນຢູ່ໃນກຸ່ມວ໋ອດແອັບ ທີ່ທ່ານສາມາດຮຽນຮູ້, ຂໍຄວາມຊ່ວຍເຫຼືອ ແລະ ຖາມຄຳຖາມ

ໃນກຸ່ມວ໋ອດແອັບນີ້ ຈະຊ່ວຍໃຫ້ທ່ານ:

> ແກ້ໄຂສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່
> ຖາມຄຳຖາມທີ່ທ່ານມີກ່ຽວກັບຫຼັກສູດສະບັບປັບປຸງໃໝ່
> ແບ່ງປັນເລື່ອງລາວທີ່ປະສົບຜົນສຳເລັດນຳເພື່ອນຮ່ວມງານຂອງທ່ານ
> ຊອກຮູ້ວ່າຄູທ່ານອື່ນ ໄດ້ເຮັດຫຍັງແດ່ໃນຫ້ອງຮຽນຂອງພວກເຂົາ

### ຄູສອງທ່ານຈັບຄູ່ກັນ ເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ



ການຈັບຄູ່ ຈະຊ່ວຍໃຫ້ທ່ານ:

> ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ
> ແບ່ງປັນປະສົບການ ການສອນທີ່ເຮັດໄດ້ດີ
> ແກ້ໄຂບັນຫາການສອນສະເພາະຮ່ວມກັນ

# ວິດີໂອສຳລັບການພັດທະນາຄູ

ທ່ານສາມາດເຂົ້າເບິ່ງວິດີໂອໄດ້ໂດຍການສະແກນຄິວອາໂຄດ

ວິດີໂອ ສຳລັບການພັດທະນາຄູ ແມ່ນສ້າງຂຶ້ນເພື່ອຊ່ວຍຄູໃນການພັດທະນາທັກສະຂອງພວກເຂົາໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່. ວິດີໂອ ແມ່ນນຳສະເໜີໃຫ້ເຫັນວິທີການທີ່ສຳຄັນທີ່ນຳໃຊ້ໃນຫຼັກສູດ ສະບັບປັບປຸງໃໝ່. ສາທິດເຕັກນິກການສອນແບບໃໝ່ ແລະ ສະແດງໃຫ້ເຫັນການຈັດຕັ້ງປະຕິບັດ ທີ່ມີປະສິດທິພາບ ເພື່ອນຳໃຊ້ເຂົ້າໃນການແກ້ໄຂບັນຫາການສອນທີ່ທ້າທ້າຍ. ວິດີໂອເຫຼົ່ານີ້ ແມ່ນນຳໃຊ້ຕົວຢ່າງທີ່ເກີດຂຶ້ນຈາກຄູຜູ້ທີ່ນຳໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ໃນຫ້ອງຮຽນຕົວຈິງໃນປະເທດລາວ.




ແຜນງານບີຄວາ ແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ

ຈັດພິມໃນເດືອນ ພຶດສະພາ 2021

# ຈະນຳໃຊ້ວິດີໂອແນວໃດ?

## 1 ເລືອກວິດີໂອທີ່ຕ້ອງການຮັບຊົມ

**ເບິ່ງຫົວຂໍ້ວິດີໂອຕ່າງໆທີ່ມີໃນຊ່ອງຢູທູບ ເລືອກວິດີໂອທີ່ທ່ານຄິດວ່າຈະຊ່ວຍໃນການສອນສະເພາະຂົງເຂດວິຊາທີ່ສອນ**

ໃນການເລືອກຮັບຊົມວິດີໂອ, ທ່ານຕ້ອງຄຳນຶງວ່າ:
- ການສອນໃດທີ່ທ້າທ້າຍທີ່ສຸດສຳລັບທ່ານ?
- ທ່ານຢາກຮຽນຮູ້ຫຍັງເພີ່ມເຕີມຈາກວິດີໂອນີ້?
- ບັນຫາໃດທີ່ທ່ານອາດພົບພໍ້ໃນບົດຮຽນຕໍ່ໄປ?

## 2 ກຽມພ້ອມຮັບຊົມ

**ອ່ານເນື້ອໃນຂອງວິດີໂອ ແລະ ກະກຽມສື່ການຮຽນການສອນທີ່ກ່ຽວຂ້ອງ ທີ່ທ່ານອາດຕ້ອງການ ເຊັ່ນວ່າປຶ້ມຄູ່ມື, ປຶ້ມແບບຮຽນ, ສື່ການສອນ, ປຶ້ມບັນທຶກ.**

ສິ່ງທີ່ຄວນຄຳນຶງ ກ່ອນຮັບຊົມວິດີໂອ:
- ທ່ານຮູ້ຫຍັງແດ່ແລ້ວ ກ່ຽວກັບຫົວຂໍ້ນີ້?
- ທ່ານຢາກຮຽນຮູ້ຫຍັງ?

## 3 ຮັບຊົມວິດີໂອ

**ຮັບຊົມວິດີໂອດ້ວຍຕົນເອງ ຫຼື ກັບຄູ, ຜູ້ອຳນວຍການ ຫຼື ຄູສຶກສານິເທດທ່ານອື່ນ. ຢຸດການຮັບຊົມ, ຍ້ອນຄືນເບິ່ງວິດີໂອ ແລະ ຫຼິ້ນວິດີໂອຄືນຫຼາຍໆຄັ້ງຕາມຄວາມຕ້ອງການ**

ໃນຂະນະທີ່ເບິ່ງວິດີໂອ ໃຫ້ສັງເກດ ແລະ ບັນທຶກສິ່ງຕໍ່ໄປນີ້:
- ຈຸດສຳຄັນຫຍັງແດ່ ທີ່ຄູໄດ້ເຮັດໃນວິດີໂອ?
- ນັກຮຽນມີການຕອບຮັບຄືແນວໃດ? (ຖ້າມີ)

## 4 ການສະທ້ອນຄືນຕໍ່ກັບວິດີໂອ

**ໃຊ້ເວລາໜ້ອຍໜຶ່ງເພື່ອທົບທວນຄືນສິ່ງທີ່ເກີດຂຶ້ນໃນວິດີໂອ ໂດຍອີງໃສ່ສິ່ງທີ່ທ່ານບັນທຶກ.**

ເພື່ອເປັນແນວທາງໃຫ້ທ່ານສະທ້ອນຄືນສິ່ງທີ່ເກີດຂຶ້ນໃນວິດີໂອ, ໃຫ້ຄຳນຶງສິ່ງຕໍ່ໄປນີ້:
- ໃນວິດີໂອ ສິ່ງໃດທີ່ຄູເຮັດແຕກຕ່າງກັບສິ່ງທີ່ທ່ານເຮັດ?
- ທ່ານຈະນຳໃຊ້ເຕັກນິກການສອນ/ ວິທີການ ການເຮັດກິດຈະກຳໃນຫ້ອງຮຽນຂອງຕົນແນວໃດ?

## 6 ການສະທ້ອນຄືນການສອນ

**ພາຍຫຼັງທ່ານໄດ້ທົດລອງນຳໃຊ້ເຕັກນິກການສອນ/ ວິທີການ/ການເຮັດກິດຈະກຳ ໃຫ້ທ່ານສະທ້ອນຄືນໃນສິ່ງທີ່ທ່ານໄດ້ສອນ. ເບິ່ງວິດີໂອຄືນຖ້າຕ້ອງການ ແລະ ທົດລອງຫຼາຍໆຄັ້ງຈົນກວ່າທ່ານຈະມີຄວາມຊຳນານໃນເຕັກນິກ/ວິທີການ/ການເຮັດກິດຈະກຳ.**

ບາງຈຸດທີ່ທ່ານອາດສະທ້ອນຄືນ:
- ສິ່ງໃດທີ່ທ່ານເຮັດໄດ້ດີ?
- ທ່ານໄດ້ສອນຫຍັງທີ່ແຕກຕ່າງຈາກການສາທິດໃນວິດີໂອບໍ່?
- ທ່ານສາມາດສອນຫຍັງທີ່ແຕກຕ່າງເພື່ອປັບປຸງການສອນຂອງທ່ານໃນຄັ້ງຕໍ່ໄປ?



## 5 ນຳໃຊ້ສິ່ງທີ່ໄດ້ຮຽນ

**ຈັດສັນເວລາ ແລະ ບົດຮຽນ ເພື່ອທົດລອງນຳໃຊ້ເຕັກນິກ/ວິທີການ/ການເຮັດກິດຈະກຳ.**

ຄຳນຶງກ່ຽວກັບຄຳຖາມລຸ່ມນີ້:
- ເມື່ອໃດທ່ານຈະລອງນຳໃຊ້ເຕັກນິກ/ ວິທີການ/ ການເຮັດກິດຈະກຳ?
- ທ່ານຢາກໃຫ້ຄູສຶກສານິເທດ/ ຜູ້ອຳນວຍການ ຫຼື ຄູສອນທ່ານອື່ນສັງເກດການສອນຂອງທ່ານບໍ່?



- ສຳລັບຄູຊັ້ນປະຖົມສຶກສາ
- ສຳລັບຜູ້ອຳນວຍການຊັ້ນປະຖົມສຶກສາ
- ສຳລັບຄູສຶກສານິເທດ
- ສຳລັບຄູຝຶກຫຼັກແຫຼ່ງ ແລະ ຄູຝຶກຂັ້ນແຂວງ

# ການພັດທະນາວິຊາຊີບແບບຕໍ່ເນື່ອງ

ການສະໜັບສະໜູນຄູໃນການພັດທະນາຄວາມຮູ້ ແລະ ທັກສະສຳລັບການສອນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່



